ສໍາລັບການອອກຂ່າວດ່ວນ

# ຄະນະກໍາມະທິການແມ່ນໍ້າຂອງສາກົນເປີດໂຄງການຮ່ວມ ສອງໂຄງການ ເພື່ອການຄຸ້ມຄອງຊັບພະຍາກອນອ່າງແມ່ນໍ້າຂອງໃຫ້ຂຶ້ນ ແລະ ແກ້ໄຂ ບັນຫາໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ

**ນະຄອນຫລວງວຽງຈັນ**, **ສປປ ລາວ**, 17 **ມັງກອນ** 2018 - ຄະນະກໍາມະທິການແມ່ນໍ້າຂອງສາກົນ (ຄມສ) ໄດ້ເປີດໂຄງການຮ່ວມສອງໂຄງການ ລະຫວ່າງ ປະເທດ ກໍາປູເຈຍ ແລະ ສປປ ລາວ, ແລະ ປະເທດ ກໍາປູເຈຍ ແລະ ປະເທດ ໄທ ເພື່ອການຄຸ້ມຄອງຊັບພະຍາກອນອ່າງແມ່ນໍ້າຂອງໃຫ້ດີຂຶ້ນ ພ້ອມທັງ ເພື່ອ ແກ້ໄຂບັນຫາໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ. ກອງປະຊຸມເປີດໂຄງການໄດ້ຈັດຂຶ້ນ ໃນມື້ວານນີ້ທີ່ ນະຄອນຫລວງວຽງຈັນ.

ພາຍໃຕ້ການສະໜັບສະໜູນຂອງ ລັດຖະບານປະເທດເຢຍລະມັນໂດຍຜ່ານອົງການ Deutsche Gesellschaft für Internationale Zusammenarbeit (GIZ), ໂຄງການດັ່ງກ່າວ ສຸມໃສ່ການ ວາງແຜນພັດທະນາຂ້າມຊາຍແດນ ເພື່ອການຄຸ້ມຄອງຊັບພະຍາກອນນໍ້າ ໃນຂົງເຂດ ນໍ້າຕົກຄອນພະເພັງ ລະຫວ່າງ ປະເທດ ກໍາປູເຈຍ ແລະ ສປປ ລາວ, ລວມທັງ ການຕິດຕາມ ຜົນກະທົບທາງສິ່ງແວດລ້ອມຈາກເຂື່ອນໄຟຟ້າພະລັງງານນໍ້າດອນສະໂຮງ; ແລະ ການປະເມີນຜົນ ກໍຄື ການວາງແຜນຮ່ວມໃນການຄຸ້ມຄອງໄພແຫ້ງແລ້ງ ແລະ ໄພນໍ້າຖ້ວມໃນເຂດຊາຍແດນຂອງ ປະເທດ ກໍາປູເຈຍ ແລະ ປະເທດໄທ ທີ່ໄດ້ຮັບຜົນກະທົບຈາກໄພພນໍ້າຖ້ວມທີ່ຖີ່ຂື້ນ.

ທ່ານ ຟາມ ຕວນ ຟານ, ຜູ້ອໍານວຍການໃຫຍ່ ຂອງຄະນະກໍາມະທິການ ໄດ້ກ່າວວ່າ: “ພວກເຮົາມີຄວາມພູມໃຈທີ່ທັງສອງໂຄງການຮ່ວມນີ້ໄດ້ດຶງດູດການສະໜັບສະໜູນດ້ານທຶນຮອນ ແລະ ຈະໄດ້ຮັບການຈັດຕັ້ງປະຕິບັດໃນທີ່ສຸດ. ຄາດວ່າ ໂຄງການເຫຼົ່ານີ້ ຈະສາມາດນໍາການລົງທຶນຮ່ວມ ໃນການປັບປຸງຄວາມໝັ້ນຄົງດ້ານນໍ້າ ແລະ ສົ່ງເສີມການພັດມະນາເສດຖະກິດ ແລະ ສັງຄົມ ໃນເຂດ ຂ້າມຊາຍແດນຂອງໂຄງການ ແລະ ເຂດອື່ນໆ.”

GIZ ໄດ້ເປັນຄູ່ຮ່ວມພັດທະນາ ຂອງຄະນະກໍາມະທິການທີ່ຍາວນານ, ສະໜັບສະໜູນຢ່າງຕັ້ງໜ້າໃຫ້ແກ່ ຄະນະກໍາມະທິການ ໃນຫຼາຍຂະແໜງການ, ລວມທັງ ການຄຸ້ມຄອງຊັບພະຍາກອນນໍ້າ ແບບປະສົມປະສານ, ການຫລຸດຜ່ອນໄພນໍ້າຖ້ວມ, ການປ່ຽນແປງດິນຟ້າອາກາດ, ການພັດທະນາ ເຂື່ອນໄຟຟ້າພະລັງງານນໍ້າຕົກແບບຍືນຍົງ, ການປັງປຸງສະຖາບັນ ແລະ ການເຊື່ອມສານນົດບາດຍິງຊາຍ.

ທ່ານ ເບີທຮອງ ເມນີເອ, ຫົວໜ້າແຜນການງານຮ່ວມມື MRC-GIZ ໄດ້ກ່າວວ່າ: “ປະເທດເຢຍລະມັນໃຫ້ຄວາມສໍາຄັນ ໃນການຈັດຕັ້ງປະຕິບັດ ໂຄງການຂ້າມຊາຍແດນຂອງ ຄມສ ທີ່ແນ່ໃສ່ ທີ່ສົ່ງເສີມການຮ່ວມມືລະຫວ່າງ ແລະ ພາຍໃນ ສະມາຊິກຄະນະກໍາມະທິການ.”

ໂດຍການຈັດຕັ້ງປະຕິບັດເບື້ອງຕົ້ນເປັນ ໄລຍະ ໜຶ່ງປີ ແຕ່ ເດືອນ ເມສາ 2018 ເຖິງ ມີນາ 2019, ໂຄງການຮ່ວມທັງສອງນີ້ ແມ່ນ ສອງໃນຫ້າໂຄງການ ທີ່ໄດ້ຖືກສ້າງຂຶ້ນໂດຍການນໍາໃຊ້ ຍຸດທະສາດພັດທະນາອ່າງ ແລະ ຈາກການ ລະບຸ ແລະ ຕົກລົງໃນ ແຜນປະຕິບັດງານແຫ່ງຊາດ. ບັນດາປະເທດສະມາຊິກຈະນໍາໃຊ້ ໂຄງການເຫຼົ່ານີ້ເພື່ອສົ່ງເສີມການຮ່ວມມືຂ້າມຊາຍແດນ ໃນວຽກງານ ການວາງແຜນ ແລະ ການຄຸ້ມຄອງຊັບພະຍາກອນນໍ້າ ເພື່ອສ້າງຜົນປະໂຫຍດໃຫ້ທຸກຝ່າຍ.

ໃນການສ້າງໂຄງການຮ່ວມເຫຼົ່ານີ້ແຕ່ປີ 2013 ຫາ 2016, ກອງເລຂາຄະນະກຳມະການ ພາບໃຕ້ແຜນງານການພັດທະນາອ່າງ ໄດ້ອຳນວຍຄວາມສະດວກຕໍ່ການສົນທະນາ-ປຶກສາຫາລື ລະຫວ່າງບັນດາປະເທດສະມາຊິກ ໂດຍ ອີງຕາມການ ປະເມີນຂອງຄະນະກຳມະທິການ ແລະ ແຜນແຫ່ງຊາດ.

ກອງປະຊຸມເປີດໂຄງການທີ່ປິດລົງໃນມື້ດຽວກັນຂອງວານນີ້ ຍັງໄດ້ປຶກສາຫາລືການ ຈັດຕັ້ງປະຕິບັດໂຄງການ, ລວມທັງໂຄງສ້າງການປົກຄອງ.

**ໝາຍເຫດຈາກ ບັນນາທິການ:**

**ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ)** ແມ່ນອົງການລະຫວ່າງລັດຖະບານ ເພື່ອການສົນທະນາ ແລະ ການຮ່ວມມືໃນຂົງເຂດແມ່ນ້ຳຂອງຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນ້ຳຂອງລະຫວ່າງ ປະເທດ ກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ. ຄມສ ເປັນເວທີການທູດກ່ຽວກັບນ້ຳ ແລະ ສູນຄວາມຮູ້ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນ້ຳ ເພື່ອການພັດທະນາແບບຍືນຍົງໃນຂົງເຂດ.

**-ຈົບຂ່າວ-**

ຂໍ້ມູນເພີ່ມເຕີມ, ຕິດຕໍ່:
ທ່ານ ໂຊພຽກ ແມຣ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ຕໍ່. 4607
ມືຖື: +856-20-77779168